ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
===== 000 =====

LALCO
LAO ASEAN LEASING PUBLIC COMPANY

ເລກທີ 9300
ນະຄອນຫຼວງວຽງຈັນ, ວັນທີ: 28 ມີນາ 2025

ຮຽນ: - ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ,
- ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ,
- ບັນດາຜູ້ຖືຮຸ້ນ ຂອງ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ທີ່ນັບຖື.

ເລື່ອງ: **ແຈ້ງມະຕິກອງປະຊຸມສາມັນສະພາບໍລິຫານ ຄັ້ງທີ 1/2025 ຄັ້ງວັນທີ 28 ມີນາ 2025.**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ, ສະບັບເລກທີ 27/ຄຄຊ, ລົງວັນທີ 29 ມີນາ 2022;
- ອີງຕາມ ລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ, ສະບັບເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.

ກອງປະຊຸມສາມັນສະພາບໍລິຫານ ຄັ້ງທີ 1/2025 ຂອງບໍລິສັດ ລາວອາຊຽນເຊົ່າສິນເຊື່ອ ມະຫາຊົນ ("ລອຊ" ຫຼື "ບໍລິສັດ") (ຕໍ່ໄປເອີ້ນວ່າ"ກອງປະຊຸມ") ແມ່ນໄດ້ຈັດຂຶ້ນໃນວັນທີ 28 ມີນາ 2025 ເວລາ 08:00 ໂມງ ທີ່ຫ້ອງການຂອງ ບໍລິສັດ. ໂດຍການເປັນປະທານຂອງທ່ານ ນາງ ຢຸກິ ສະກອດ , ປະທານສະພາບໍລິຫານ, ພ້ອມດ້ວຍຄະນະສະພາບໍລິຫານ ອີກ 4 ທ່ານ ແລະ ຄະນະບໍລິຫານເປັນຜູ້ສັງເກດການ.

ໃນກອງປະຊຸມໄດ້ປຶກສາຫາລືບັນຫາຕ່າງໆ ແລະ ມີມະຕິທີ່ຕົກລົງ ດັ່ງລຸ່ມນີ້:

- ເຫັນດີກຳນົດເອົາວັນທີ 11 ເມສາ 2025 ເປັນວັນປິດປຶ້ມບັນຊີຜູ້ຖືຮຸ້ນຂອງບໍລິສັດ ເພື່ອກຳນົດລາຍຊື່ຜູ້ຖືຮຸ້ນທີ່ມີສິດເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024.
- ເຫັນດີໃຫ້ມີການຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024 ໃນວັນທີ 30 ເມສາ 2025 ເວລາ 10:30 ນາທີ (ການລົງທະບຽນເລີ່ມຕົ້ນ 9:30) ທີ່ ບໍລິສັດລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ, ຊັ້ນ 6, ຕຶກ NNN, ຖະໜົນໜູລີຈັນ, ບ້ານໂພນສີນວນ, ເມືອງສີສັດຕະນາກ, ນະຄອນຫລວງວຽງຈັນ. ຊຶ່ງວາລະທີ່ສະເໜີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີພິຈາລະນາ ແລະ ຮັບຮອງ ມີດັ່ງນີ້:
  (1) ພິຈາລະນາ ແລະ ຮັບຮອງເອົາບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023;
  (2) ພິຈາລະນາ ແລະ ຮັບຮອງເອົາ ເພື່ອຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024;
  (3) ພິຈາລະນາ ແລະ ແຕ່ງຕັ້ງ ສະມາຊິກ ສະພາບໍລິຫານ ແລະ ຄະນະອຳນວຍການ ຊຸດເກົ່າ;
  (4) ພິຈາລະນາ ແລະ ຮັບຮອງ ບົດລາຍງານການເຄື່ອນໄຫວທຸລະກິດ ແລະ ເອກະສານລາຍງານການເງິນ ປະຈຳປີ 2024 ຂອງບໍລິສັດ;

(5) ພິຈາລະນາ ແລະ ຮັບຮອງ ການ ຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ສຳລັບປີສິ້ນສຸດວັນທີ 31 ທັນວາ 2023. ຂໍ້ມູນລາຍລະອຽດຂອງການຈ່າຍເງິນປັນຜົນມີດັ່ງນີ້:
   - ວັນທີຊຳລະ: ວັນທີ 27 ມິຖຸນາ 2025
   - ມື້ປິດປຶ້ມກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມຜູ້ຖືຫຸ້ນສາມັນປະຈຳປີ ແລະ ສິດຮັບເງິນປັນຜົນ: ວັນທີ 11 ເມສາ 2025
   - ເງິນປັນຜົນ: 600 ກີບ/ຮຸ້ນ
   - ຮຸ້ນທັງໝົດ: 301,500,000 ຮຸ້ນ
   - ຈຳນວນທັງໝົດ : 180,900,000,000 ກີບ
(6) ພິຈາລະນາ ແລະ ຮັບຮອງ ແຜນການດຳເນີນທຸລະກິດ ປະຈຳປີ 2025 ຂອງບໍລິສັດ;
(7) ພິຈາລະນາ ແລະ ຮັບຮອງ ແຕ່ງຕັ້ງຜູ້ກວດສອບພາຍນອກ ບໍລິສັດ Ernst & Young Lao Co., Ltd ເປັນຜູ້ກວດສອບຂອງບໍລິສັດ ປະຈຳປີ 2025;
(8) ພິຈາລະນາ ແລະ ຮັບຮອງ ການກູ້ຢືມເງິນຈາກທະນາຄານທຸລະກິດພາຍໃນ ແລະ ສະຖາບັນການເງິນອື່ນໆ ໃນສະກຸນເງິນກີບຈຳນວນ 150,000,000,000 - 200,000,000,000 ກີບ ແລະ ສະກຸນເງິນໂດລາຈຳນວນ15,000,000 - 40,000,000 ໂດລາ;
(9) ພິຈາລະນາ ແລະ ຮັບຮອງ ອື່ນໆ (ຖ້າມີ).

ກອງປະຊຸມໄດ້ປິດລົງເວລາ 11:00 ໂມງ ຂອງວັນດຽວກັນ.

ດ້ວຍຄວາມນັບຖືຢ່າງສູງ

ປະທານສະພາບໍລິຫານ

ທ່ານ Yuki Scott